# ຈົດໝາຍຂ່າວ

ທັນວາ 2023
ສະບັບ #8

ວາລະສານປະຈຳໄຕມາດໃນການຄົ້ນຄວ້າທາງດ້ານໂພຊະນາການໃນ ສປປ ລາວ

*ເນື້ອໃນ*

–

*ການຝຶກອົບຮົມວິທີວິທະຍາໃນການຂຽນບົດຄົ້ນຄວ້າ*

*ວາລະການຮຽນຮູ້ ສໍາລັບການໃຫ້ຄໍາປຶກສາການສົ່ງເສີມ ແລະ ຕິດຕາມການຈະເລີນເຕີບໂຕຂອງຮ່າງກາຍ*




ຮູບພາບດຣ.ສຸກສະໝອນ ທອງມີໄຊ ນຳສະເໜີໂປສເຕີ ໃນຫົວຂໍ້ "ການບໍລິໂພກສານອາຫານ ແລະ ຈຸນລະສານອາຫານ ແລະ ຄວາມພຽງພໍຂອງມັນໃນເດັກອາຍຸ 12-23 ເດືອນ ໃນ ສປປ ລາວ: ການສຶກສານະຈຸດເວລາໃດໜຶ່ງ ຢູ່ຊຸມຊົນ ແຂວງວຽງຈັນ." ຕໍ່ຄະນະກຳມະການ ໃນ ກອງປະຊຸມສາທາລະນະສຸກສາດລາວ ຄັ້ງທີ 3

## ກອງປະຊຸມ ສາທາລະນະສຸກສາດລາວ ຄັ້ງທີ 3 ສຸມໃສ່ວຽກງານໂພຊະນາການ

ສະມາຄົມສາທາລະນະສຸກສາດ ໄດ້ສຳເລັດການຈັດກອງປະຊຸມ ສາທາລະນະສຸກສາດລາວ ຄັ້ງທີ 3 ໃນຫົວຂໍ້ "ຄວາມທ້າທາຍ ແລະ ຜົນສຳເລັດ ຂອງແຜນຍຸດທະສາດ ໂພຊະນາການແຫ່ງຊາດ ໃນ ສປປ ລາວ" ໃນວັນທີ 9 ພະຈິກ 2023, ທີ່ ມະຫາວິທະຍາໄລ ສຸພານຸວົງ, ນະຄອນຫຼວງພະບາງ. ກອງປະຊຸມດັ່ງກ່າວມີຜູ້ເຂົ້າຮ່ວມຈາກບັນດາອາຈານ ແລະ ນັກສຶກສາດ້ານ ສາທາລະນະສຸກສາດ ຫຼາຍກວ່າ 250 ທ່ານ; ບັນດານັກຄົ້ນຄວ້າຈາກຫຼາຍປະເທດ ກໍໄດ້ເຂົ້າຮ່ວມໂດຍມາກຈາກສະຫະລັດ ອາເມລິກາ, ປະເທດໄທ, ປະເທດຍີ່ປຸ່ນ, ປະເທດຝຣັ່ງ ແລະ ອື່ນໆ.

ໂຄງການສ້າງຄວາມເຂັ້ມແຂງດ້ານການຄົ້ນຄວ້າໂພຊະນາການ ພູມໃຈທີ່ໄດ້ເປັນຜູ້ໃຫ້ທຶນ ແລະ ສະໜັບສະໜູນ ກອງປະຊຸມສຳມະນາ ທີ່ສຸມໃສ່ວຽກງານໂພຊະນາການ. ທ່ານສາດສະດາຈານ ດຣ. Garald Shively, ຮອງຄະນະບໍດີ ແລະ ຜູ້ອຳນວຍການ ໂຄງການສາກົນ ໃນຄະນະກະສິກຳ ຂອງ ມະຫາວິທະຍາໄລ ເພີດູ ໄດ້ນຳສະເໜີກ່ຽວກັບ ວິທີການ ໃນການສົ່ງເສີມຄວາມສາມາດ ໃນການຄົ້ນຄ້ວາແຫ່ງຊາດ ໃຫ້ເຂັ້ມແຂງ. ມີໂປສເຕີຈຳນວນ 34 ແຜ່ນ ແລະ ໄດ້ມີການນຳສະເໜີປາກເປົ່າຈຳນວນ 32 ຫົວຂໍ້. ກອງປະຊຸມດັ່ງກ່າວໄດ້ມີການແບ່ງກຸ່ມນຳສະເໜີ ບັນດາຫົວຂໍ້ກ່ຽວກັບໂພຊະນາການໃນໄວໜຸ່ມ, ສຸຂະພາບແມ່ ແລະ ເດັກ ແລະ ຄວາມຕ້ອງການຂອງປະຊາກອນທີ່ດ້ອຍໂອກາດ. ລິ້ງເພື່ອດາວໂຫຼດປຶ້ມບົດຄັດຫຍໍ້: https://bit.ly/41Dlvep

ຮ່ວມງານກັບ
Partnering with:

ສະໜັບສະໜູນທຶນໂຄງການໂດຍ
Funded by:
USAID FROM THE AMERICAN PEOPLE

ຈັດຕັ້ງປະຕິບັດໂຄງການໂດຍ
Implemented by:
CRS CATHOLIC RELIEF SERVICES

ໃຫ້ການຊ່ວຍເຫຼືອທາງດ້ານວິຊາການໂດຍ
Technical Support by:
PURDUE UNIVERSITY
INDIANA UNIVERSITY

ຮ່ວມງານກັນເປັນເຄືອຄ່າຍ
Working together
as the consortium:
LASER PULSE



## ການຝຶກອົບຮົມ ວິທີວິທະຍາ ໃນການຂຽນບົດຄົ້ນຄວ້າ

ທີມງານຫຼາຍພາກສ່ວນ ທັງນັກຄົ້ນຄວ້າວິທະຍາສາດ ແລະ ອາຈານຈາກມະຫາວິທະຍາໄລ ເພີດູ (PU) ແລະ ອິນເດຍນາ (IU) ໄດ້ເດີນທາງມາ ສປປ ລາວໃນຕົ້ນເດືອນພະຈິກ ແລະ ໄດ້ນຳສະເໜີການຝຶກອົບຮົມທີ່ຈັດຂຶ້ນໃນວັນທີ 6-8 ແລະ 10 ພະຈິກ 2023 ທີ່ນະຄອນຫຼວງພະບາງ. ການຝຶກອົບຮົມແມ່ນເນັ້ນໃສ່ການຂຽນບົດຄົ້ນຄວ້າກ່ຽວກັບໂພຊະນາການໃຫ້ແກ່ທີມທີ່ໄດ້ຮັບທຶນຄົ້ນຄວ້າຂະໜາດນ້ອຍຈາກໂຄງການ, ຜູ້ເຂົ້າຮ່ວມການຝຶກອົບຮົມໃນຄັ້ງນີ້ແມ່ນສະມາຊິກຂອງ 6 ທີມຄົ້ນຄວ້າຈາກມະຫາວິທະຍາໄລວິທະຍາສາດສຸຂະພາບຄື: ຄະນະສາທາລະນະສຸກ ແລະ ຄະນະແພດສາດ, ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ, ສູນໂພຊະນາການ ລວມທັງໝົດ 29 ທ່ານ. ການຝຶກອົບຮົມນີ້ແມ່ນເພື່ອສ້າງຄວາມສາມາດ ຂອງທີມງານໃນການປັບປຸງທັກສະ ແລະ ການຂຽນບົດລາຍງານ ຂອງນັກຄົ້ນຄວ້າ. ການຝຶກອົບຮົມຄັ້ງນີ້ ແມ່ນໄດ້ປະກາດປິດກິດຈະກຳທຶນຄົ້ນຄວ້າຂະໜາດນ້ອຍ ທີ່ໄດ້ດຳເນີນມາເປັນເວລາ 2 ປີ. ຜູ້ເຂົ້າຮ່ວມຍັງມີໂອກາດໄດ້ເຮັດວຽກຢ່າງໃກ້ຊິດກັບອາຈານທີ່ປຶກສາ ທີ່ມາຈາກມະຫາວິທະຍາໄລ PU ແລະ IU ໃນການພັດທະນາໂມດູນການຝຶກອົບຮົມໃໝ່ໆ ທີ່ຍັງບໍ່ທັນມີຢູ່ໃນ ສປປ ລາວ ໂດຍຄາດວ່າຈະນຳໃຊ້ການຮຽນການສອນໃຫ້ແກ່ຄູອາຈານ ແລະ ນັກສຶກສາໃນລະດັບມະຫາວິທະຍາໄລ.





## ວາລະການຮຽນຮູ້ສຳລັບການໃຫ້ຄຳປຶກສາ ການສົ່ງເສີມ ແລະ ຕິດຕາມການຈະເລີນເຕີບໂຕ ຂອງຮ່າງກາຍ

ການສົ່ງເສີມ ແລະ ຕິດຕາມການຈະເລີນເຕີບໂຕ ຂອງຮ່າງກາຍ (GMP) ຖືກນຳໃຊ້ເປັນຈຸດສຸມ ສຳລັບການດູແລປ້ອງກັນສຸຂະພາບເດັກນ້ອຍ, ໂພຊະນາການ ແລະ ພັດທະນາດ້ານການບໍລິການໃນທົ່ວໂລກ. ຢູ່ໃນ ສປປ ລາວ, ໂຄງການ ANRCB ໄດ້ຮ່ວມມືກັບສູນໂພຊະນາການ ເພື່ອສ້າງປື້ມຄູ່ມືແນະນຳມາດຕະຖານດ້ານການວັດແທກຮ່າງກາຍ ແລະ ຜະລິດອຸປະກອນການຝຶກອົບຮົມຫຼາຍໆຢ່າງເພື່ອຍົກລະດັບຄຸນນະພາບ ຂອງຂໍ້ມູນທີ່ເກັບກຳ ໃນລະຫວ່າງການຄົ້ນຄ້ວາ GMP ແລະ ໂພຊະນາການພາຍໃນປະເທດ. ໃນຂະນະທີ່ການວັດແທກຮ່າງກາຍໃຫ້ໄດ້ຄຸນະພາບແມ່ນຕ້ອງຮັບປະກັນຂໍ້ມູນທີ່ຖືກຕ້ອງກ່ຽວກັບການເຕີບໂຕ ຂອງເດັກນ້ອຍ, ແຕ່ກໍຍັງເປັນທີ່ຖົກຖຽງກັນຢູ່ວ່າຄວນຮັບມືຄືແນວໃດ ຕໍ່ກັບແຕ່ລະຜົນໄດ້ຮັບ ເພື່ອປັບປຸງໂພຊະນາການ.

ບໍ່ດົນມານີ້, *ໂຄງການໂພຊະນາການກ້າວໜ້າ* ຂອງ USAID ສາກົນ, ໄດ້ຜະລິດວາລະການຮຽນຮູ້ແບບລະອຽດ ສຳລັບກິດຈະກຳສົ່ງເສີມການເຕີບໂຕ ຂອງຮ່າງກາຍ, ຊ່ວຍໃຫ້ການສະຫຼຸບ ແລະ ກຳນົດຄຳຖາມການຄົ້ນຄວ້າທີ່ຍັງບໍ່ຖືກຕັ້ງຂຶ້ນ. ມາຮອດປັດຈຸບັນ, ການຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າ ເມື່ອການຕິດຕາມການເຕີບໂຕ ລວມກັບການໃຫ້ຄຳປຶກສາທີ່ມີຄຸນນະພາບ ແລະ ການໃຫ້ຄວາມສຳຄັນໃນການເຂົ້າເຖິງການບໍລິການສຸຂະພາບ, ຜົນໄດ້ຮັບດ້ານໂພຊະນາການໄດ້ຮັບການປັບປຸງ ແຕ່ຂໍ້ມູນຍັງສະແດງໃຫ້ເຫັນວ່າການຕິດຕາມພຽງຢ່າງດຽວ ຫຼື ການປະສົມປະສານ ຂໍ້ມູນຂ່າວສານແບບທົ່ວໄປພຽງຢ່າງດຽວ ແມ່ນບໍ່ມີປະສິດທິພາບ. ສິ່ງທີ່ກຳນົດຄຸນນະພາບໃນການໃຫ້ຄຳປຶກສາໄດ້ດີທີ່ສຸດ ແມ່ນພັດທະນາທັກສະການໃຫ້ຄຳປຶກສາ ແລະ ສະຖານທີ່ໃຫ້ຄຳປຶກສາ ທັງໝົດນີ້ຮຽກຮ້ອງໃຫ້ມີການຄົ້ນຄວ້າຕື່ມອີກ.

ສປປ ລາວ ໄດ້ມີການພັດທະນາ ມາດຕະການ ທີ່ມີມາດຕະຖານສຳລັບ GMP ທີ່ເອີ້ນວ່າແມ່ນການວັດແທກການຈະເລີນເຕີບໂຕຂອງຮ່າງກາຍ ທີ່ຕ້ອງມີການສົມທົບກັບ ຄຳຖາມຄັດກອງ ທີ່ສຳຄັນກ່ຽວກັບການລ້ຽງດູເດັກ. ມາດຕະການດັ່ງກ່າວແມ່ນເນັ້ນໜັກວ່າໃນການປະເມີນເດັກ ຕ້ອງໃຫ້ມີການໃຫ້ຄຳປຶກສາ ແລະ ຮັບຟັງຜູ້ດູແລເດັກ ກ່ອນທີ່ຈະໃຫ້ຄຳແນະນຳ. ມາດຕະການ ການດູແລເດັກດີແມ່ນລວມເອົາ ການຕິດຕາມການຈະເລີນເຕີບໂຕ ເຊິ່ງແມ່ນໜຶ່ງໃນ 9 ບາດກ້າວສຳຄັນ ຂອງຮ່າງກາຍ, ຄຽງຄູ່ກັບການໃຫ້ວັກຊີນກັນພະຍາດ ແລະ ການກັ່ນຕອງເບິ່ງພັດທະນາການ ຂອງເດັກ, ຂອງການດູແລປ້ອງກັນເດັກນ້ອຍ ຢ່າງເປັນປະຈຳ. ອ່ານ 9 ບາດກ້າວ ສຳລັບການດູແລເດັກດີຂອງລາວໄດ້ທີ່: https://bit.ly/3tzmZtC.

ເອກະສານກ່ຽວກັບການວາລະການຮຽນຮູ້ແລະເອກະສານອື່ນໆທີ່: http://bit.ly/anrcb

# ການເຊື່ອມຕໍ່ຊ່ອງຫວ່າງຂອງການເສີມສ້າງນະໂຍບາຍ ແລະ ການວາງແຜນງານດ້ານໂພຊະນາການໂດຍອີງໃສ່ຫຼັກຖານຢູ່ໃນ ສປປ ລາວ

ເພື່ອເສີມຂະຫຍາຍນະໂຍບາຍ ແລະ ປັບປຸງໂຄງການດ້ານໂພຊະນາການໂດຍອີງໃສ່ຫຼັກຖານເປັນພື້ນຖານ, ໂຄງການສ້າງຖານຂໍ້ມູນຂ່າວສານແຫ່ງຊາດດ້ານໂພຊະນາການ (NIPN) ໄດ້ມີການເຄື່ອນໄຫວຢ່າງຕັ້ງໜ້າໃນການເພີ່ມທະວີການປະສານງານ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານນລັດຖະກອນໃນຂັ້ນສູນກາງ ແລະທ້ອງຖິ່ນຂອງ ສປປ ລາວນັບແຕ່ປີ 2020 ເປັນຕົ້ນມາ. ໂຄງການລິເລີ່ມນີ້ແມ່ນໄດ້ໄດ້ຮັບການຊຸກຍູ້ ໂດຍການຮ່ວມມືຂອງສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດສັງຄົມ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າວິໄຈການພັດທະນາ, ກະຊວງແຜນການ ແລະ ການລົງທຶນ, ໃນການດຳເນີນການຈັດຝຶກອົບຮົມຈຳນວນ 4 ຄັ້ງຕໍ່ປີ ທີ່ເນັ້ນໃສ່ການວິເຄາະຂໍ້ມູນ ແລະ ການວິເຄາະນະໂຍບາຍ.




ເຊິ່ງການຝຶກອົບຮົມຄັ້ງສຸດທ້າຍຂອງປີ 2023 ຂອງໜ່ວຍງານວິເຄາະນະໂຍບາຍໄດ້ຈັດຂຶ້ນທີ່ໂຮງແຮມ ແກຣນຣິເວີ ເມືອງວັງວຽງ, ແຂວງວຽງຈັນ, ແຕ່ວັນທີ 21 ຫາ 23 ພະຈິກ 2023. ການຝຶກອົບຮົມໃນ 3 ວັນນີ້, ເປັນສ່ວນໜຶ່ງຂອງການຝຶກອົບຮົມແບບຕໍ່ເນື່ອງພາຍໃຕ້ຫົວຂໍ້ "ວິທີການດຳເນີນການວິເຄາະນະໂຍບາຍ" ເຊິ່ງໄດ້ລົງເລິກເຖິງເງື່ອນໄຂດ້ານການປະເມີນຜົນ, ມາດຖານທາງເລືອກດ້ານນະໂຍບາຍ, ການຊີ້ໃຫ້ເຫັນບັນດາມາດຕະການທີ່ສຳຄັນເຊັ່ນ: ຕົ້ນທຶນ, ປະສິດທິພາບ ແລະ ຄວາມສະເໝີພາບ. ນອກຈາກນີ້ການຝຶກອົບຮົມຍັງໄດ້ສຶກສາເຖິງວິທີການກຳນົດທາງເລືອກດ້ານນະໂຍບາຍ ແລະ ການກຳນົດທາງດ້ານຍຸດທະສາດ

ສຳລັບໜ່ວຍງານວິເຄາະຂໍ້ມູນ, ໄດ້ຈັດການຝຶກອົບຮົມຄັ້ງທີ 4 ປະຈຳປີ 2023 ຂອງຕົນຂຶ້ນໂດຍເນັ້ນໃສ່ການວິເຄາະທາງດ້ານສະຖິຕິຢູ່ທີ່ສູນຝຶກອົບຮົມການສຶກສາ, ທີ່ເມືອງວັງວຽງ,ແຂວງວຽງຈັນ ນັບແຕ່ວັນທີ 28 ພະຈິກ ຫາ ວັນທີ 1 ທັນວາ 2023. ໂດຍການຝຶກອົບຮົມໃນຄັ້ງນີ້ ໄດ້ເນັ້ນໃສ່ການທົດສອບທາງສະຖິຕິແບບພັນລະນາ ແລະ ສະຖິຕິແບບອະນຸມານ, ແລະກວມເອົາຂໍ້ມູນທັງສອງປະເພດແບບ parametric ແລະ non-parametric
ການຝຶກອົບຮົມໃນຂັ້ນສູນກາງເຫຼົ່ານັ້ນແມ່ນໄດ້ເຂົ້າຮ່ວມຢ່າງຕັ້ງໜ້າຈາກພະນັກງານວິຊາການ ຈາກບັນດາກະຊວງຕ່າງໆເປັນຕົ້ນແມ່ນ: ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກຳ ແລະ ປ່າໄມ້, ພ້ອມທັງສູນສະຖິຕິແຫ່ງຊາດ ແລະ ບັນດາພະແນກທີ່ກ່ຽວຂ້ອງພາຍໃນສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດສັງຄົມ ແລະ ສະຖາບັນຄົ້ນຄວ້າວິໄຈການພັດທະນາ.
ນອກຈາກນັ້ນ, ເພື່ອເປັນການຂະຫຍາຍການເຂົ້າເຖິງ, ທາງໂຄງການໄດ້ລິເລີ່ມສຸມໃສ່ການຝຶກອົບຮົມໃນຂັ້ນແຂວງ. ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ໄດ້ຈັດຕັ້ງການຝຶກອົບຮົມຂັ້ນແຂວງຄັ້ງທຳອິດທີ່ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ ເມື່ອວັນທີ 12 ຫາ 14 ທັນວາ 2023 ທີ່ຜ່ານມາ ໂດຍມີຈຸດປະສົງເພື່ອເສີມສ້າງຄວາມເຂົ້າໃຈກ່ຽວກັບຄວາມຮູ້ພື້ນຖານທາງສະຖິຕິ ແລະ ການນຳໃຊ້ໂປຣແກຣມ STATA ໃຫ້ກັບພະນັກງານລັດຖະກອນຂັ້ນແຂວງ ໃນແຂວງສະຫວັນນະເຂດ ແລະ ແຂວງຄຳມ່ວນ. ໃນໄລຍະເວລາດຽວກັນ, ທາງສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດສັງຄົມ ກໍໄດ້ດຳເນີນການຝຶກອົບຮົມທີ່ເມືອງໄຊ, ແຂວງອຸດົມໄຊ ໂດຍມີເນື້ອໃນສິດສອນກ່ຽວກັບພື້ນຖານໃນການວິເຄາະນະໂຍບາຍ ໃຫ້ແກ່ຜູ້ເຂົ້າຮ່ວມຈາກແຂວງອຸດົມໄຊ ແລະ ແຂວງຜົ້ງສາລີ

ການຝຶກອົບຮົມຂັ້ນແຂວງໄດ້ມຸ່ງເນັ້ນໄປທີ່ການພັດທະນາທັກສະ ແລະ ຄວາມຮູ້ພື້ນຖານ ໃຫ້ແກ່ພະນັກງານວິຊາການຈາກຫຼາຍຂະແໜງການໃນຂັ້ນແຂວງ ເຊິ່ງສະແດງໃຫ້ເຫັນເຖິງແນວທາງການສ້າງຄວາມອາດສາມາດທີ່ກວ້າງຂວາງ ແລະ ຮອບດ້ານ.
ພ້ອມກັນນັ້ນ, ທາງໂຄງການຍັງໄດ້ດຳເນີນຈັດຕັ້ງການເຜີຍແຜ່ຜົນການຄົ້ນຄວ້າ ທີ່ແຂວງສາລະວັນ, ແຂວງຫົວພັນ ແລະ ແຂວງສະຫວັນນະເຂດ. ກິດຈະກຳດັ່ງກ່າວ ມີຈຸດປະສົງໃນການເຜີຍແຜ່ຜົນການຄົ້ນຄວ້າໃຫ້ກັບ ຜູ້ເຂົ້າຮ່ວມທີ່ຫຼາກຫຼາຍຂະແໜງການບໍ່ວ່າຈະເປັນ ນັກຄົ້ນຄວ້ານະໂຍບາຍ, ນັກວິຊາການ ແລະ ພາກສ່ວນທີ່ກ່ຽວທາງດ້ານໂພຊະນາການອື່ນໆ. ເຊິ່ງການເຜີຍແຜ່ເຫຼົ່ານີ້ແມ່ນເປັນຊ່ອງທາງໃນການສ້າງຄວາມເຂົ້າໃຈກ່ຽວກັບ ພາວະການຂາດສານອາຫານຂອງເດັກນ້ອຍໃນ ສປປ ລາວ, ສະເໜີແນວທາງການແກ້ໄຂດ້ານນະໂຍບາຍ ແລະ ການເຜີຍແຜ່ເວັບໄຊຕ໌ຂອງໂຄງການ NIPN ເຊິ່ງເປັນແຫຼ່ງຂໍ້ມູນທາງໂພຊະນາການຈາກຫຼາຍຂະແໜງການ ແລະ ສາມາດເຊື່ອຖືໄດ້.
ຜ່ານການຮ່ວມມືຈາກຫຼາຍພາກສ່ວນ, ໂຄງການ NIPN ໄດ້ລິເລີ່ມການວາງພື້ນຖານໃຫ້ແກ່ການຕັດສິນໃຈທາງດ້ານນະໂຍບາຍ ແລະ ແຜນງານດ້ານໂພຊະນາການທີ່ມີຂໍ້ມູນ ແລະ ຫຼັກຖານ ເຊິ່ງເປັນສ່ວນສຳຄັນໃນການສົ່ງເສີມສຸຂະພາບ ແລະ ການເປັນຢູ່ທີ່ດີຂອງປະຊາຊົນລາວໃນຂອບເຂດທົ່ວປະເທດ.

## Lao Resource Spotlight













### ສິ່ງໃໝ່ ທີ່ຈະຊ່ວຍໃຫ້ເຂົ້າໃຈດີຂຶ້ນກ່ຽວກັບ ການໃຫ້ອາຫານເທື່ອທຳອິດ ແກ່ເດັກນ້ອຍ ໃນ ສປປ ລາວ

ພໍ່ແມ່ ແລະ ຜູ້ດູແລເດັກນ້ອຍ ໃນທົ່ວໂລກ ແມ່ນຕ້ອງການໃຫ້ອາຫານເທື່ອທຳອິດ ທີ່ມີໂພຊະນາການ ແລະ ປອດໄພ ແກ່ລູກຂອງເຂົາເຈົ້າ. ແຕ່ພໍ່ແມ່, ໂດຍສະເພາະຜູ້ທີ່ຢູ່ໃນຕົວເມືອງ, ຈະຕັດສິນໃຈແນວໃດ ໃນການອາຫານແກ່ລູກ ຂອງພວກເຂົາເຈົ້າ? ມີການຫັນປ່ຽນດ້ານໂພຊະນາການ ຢູ່ທົ່ວອາຊີຕາເວັນອອກສຽງໃຕ້, ຍ້ອນຄວາມສະດວກສະບາຍ, ປະຫຍັດເວລາ ແລະ ຄວາມຕ້ອງການທີ່ເພີ່ມຂຶ້ນ ມີອິດທິພົນຕໍ່ການເລືອກອາຫານ. ສະພາບແວດລ້ອມ ຂອງອາຫານ ແມ່ນຫັນອອກຈາກອາຫານພື້ນເມືອງ ໄປສູ່ອາຫານປຸງແຕ່ງປົກກະຕິແລ້ວແມ່ນມີເກືອ, ນ້ຳຕານ ແລະ ໄຂມັນທີ່ບໍ່ດີຕໍ່ສຸຂະພາບຂ້ອນຂ້າງຫຼາຍກວ່າ, ແລະ ມີສານອາຫານຕ່ຳ. ອາຫານທີ່ຜະລິດເປັນສິນຄ້າ ວາງຂາຍຕາມທ້ອງຕະຫຼາດທີ່ເໝາະສົມກັບເດັກອ່ອນທີ່ເລີ່ມກິນເຂົ້າໄດ້ ແລະ ເດັກນ້ອຍ ທີ່ຮູ້ຈັກກັນດີໃນນາມອາຫານເສີມທາງການຄ້າ (CPCF) ບໍ່ຄ່ອຍເປັນທີ່ນິຍົມໃນ ສປປ ລາວ ທຽບກັບປະເທດອ້ອມຂ້າງ ແຕ່ການນຳໃຊ້ນັບມື້ນັບສູງຂຶ້ນຢ່າງໄວວາ. ບາງ CPCF ອາດຈະມີທ່າແຮງທີ່ຈະໄດ້ຮັບການປັບປຸງໃຫ້ດີຂຶ້ນເພື່ອຕອບສະໜອງຄວາມຕ້ອງການຂອງເດັກນ້ອຍ ແລະ ຄອບຄົວທີ່ຫຍຸ້ງວຽກ. ແຕ່ໃນປັດຈຸບັນ, CPCF ຈຳນວນຫຼາຍແມ່ນມີລະດັບນ້ຳຕານ, ເກືອ ຫຼື ໄຂມັນຫຼາຍເກີນລະດັບທີ່ແນະນຳໃຫ້ກິນຕໍ່ວັນ ແລະ/ຫຼື ມັກຖືກຕິດສະຫຼາກ ທີ່ອາດຈະເຮັດໃຫ້ຜູ້ບໍລິໂພກຄິດວ່າອາຫານດັ່ງກ່າວແມ່ນດີຕໍ່ສຸຂະພາບ ຂອງເດັກນ້ອຍ. ການຂາຍ ແລະ ການປັບສະຫຼາກຫຸ້ມຫໍ່ສິນຄ້ານີ້ ໄດ້ເພີ່ມຂຶ້ນ 45% ໃນໄລຍະ 5 ປີທີ່ຜ່ານມາຢູ່ໃນພາກພື້ນ.

ສະມາຄົມເພື່ອການປັບປຸງອາຫານເສີມໃນອາຊີຕາເວັນອອກສຽງໃຕ້, ເອີ້ນວ່າ COMMIT, ໄດ້ຖືກສ້າງຂຶ້ນເພື່ອໃຫ້ເຂົ້າໃຈການນຳໃຊ້, ຄຸນນະພາບ ແລະລະບຽບການ ຂອງອາຫານເສີມທີ່ຜະລິດເປັນການຄ້າ ໃນອາຊີຕາເວັນອອກສຽງໃຕ້. ສຳລັບ ສປປ ລາວ, COMMIT ໄດ້ເຮັດການປະເມີນຊ່ອງຫວ່າງກ່ຽວກັບສານອາຫານ ທີ່ມີຢູ່ໃນອາຫານ ຂອງເດັກນ້ອຍອາຍຸ 6 ຫາ 23 ເດືອນ, ເຊັ່ນດຽວກັນ ໃນປັດຈຸບັນກໍໄດ້ມີການປະເມີນລະບຽບການແຫ່ງຊາດ ກ່ຽວກັບການຕິດສະຫຼາກ ແລະ ສ່ວນປະກອບ ຂອງຜະລິດຕະພັນເຫຼົ່ານີ້, ແລະ ປັດຈຸບັນ ກໍໄດ້ມີການວິເຄາະ CPCF ໃນຕະຫຼາດ. ບົດລາຍງານເຫຼົ່ານີ້, ໄດ້ຮັບການພິມເຜີຍແຜ່ ຢູ່ບັນດາປະເທດໃກ້ຄຽງ ແລະ ເບິ່ງໄດ້ທີ່ unicef

ຜົນໄດ້ຮັບທີ່ສຳຄັນ ແມ່ນໄດ້ຖືກແລກປ່ຽນຢູ່ໃນ ວາລະສານໂພຊະນາການແມ່ ແລະ ເດັກສະບັບພິເສດ ເດືອນທັນວາ 2023: "ອາຫານຄາບທຳອິດທີ່ຖືກບັນຈຸໃນກ່ອງ: ຜົນໄດ້ຮັບຈາກສະມາຄົມ COMMIT ເພື່ອປົກປ້ອງອາຫານເດັກນ້ອຍ ໃນອາຊີຕາເວັນອອກສຽງໃຕ້.

## ກອງປະຊຸມສາທາລະນະສຸກ ຈະຈັດຂຶ້ນ ທີ່ ນະຄອນຫຼວງພະບາງໃນປີ 2024

ກອງປະຊຸມສາທາລະນະສຸກສາດປະຊາຄົມພາກພື້ນແມ່ນ້ຳຂອງ ຄັ້ງທີ 15 (GMS) ຈະຈັດຂຶ້ນທີ່ ນະຄອນຫຼວງພະບາງ ໃນວັນທີ 27-29 ມິຖຸນາ 2024 (ຄາດຄະເນ) ໂດຍຄະນະສາທາລະນະສຸດສາດ ຂອງ ມະຫາວິທະຍາໄລວິທະຍາສາດສຸຂະພາບ. ຫົວຂໍ້ກອງປະຊຸມ ແລະ ການສົ່ງບົດຄັດຫຍໍ້ ຈະມີການປະກາດໃຫ້ສະໝັກພາຍໃນຕົ້ນປີ 2024.

## ປຶ້ມຄຳສັບອອນໄລ ກ່ຽວກັບ ຈຸລະສານອາຫານ ແລະ ການເສີມວິຕາມິນແຮ່ທາດ ເຂົ້າໃນອາຫານ

ສູນໂພຊະນາການໄດ້ສ້າງປຶ້ມຄຳສັບໂພຊະນາການ ລາວ ແລະ ອັງກິດຂຶ້ນ ເພື່ອອະທິບາຍໃຈຄວາມສຳຄັນ ຂອງຄຳສັບດ້ານໂພຊະນາການທັງສອງພາສາ (ສາມາດເບິ່ງໄດ້ທີ່ ຈົດໝາຍຂ່າວສະບັບທີ 7). ການອ່ານບັນດາເອກະສານດ້ານວິຊາການບາງຄັ້ງອາດສ້າງຄວາມສັບສົນໃນແຕ່ລະຂະແໜງການ ໂດຍສະເພາະຄຳສັບດ້ານວິຊາການ ເຊັ່ນ ຈຸລະສານອາຫານ (micronutrient) ແລະ ການເສີມວິຕາມິນແຮ່ທາດ ເຂົ້າໃນອາຫານ (food fortification) ແລະ ມີການອະທິບາຍຢ່າງຊັດເຈນໂດຍອີງໃສ່ຂໍ້ກຳນົດຂອງສາກົນ
https://dinalexicon.micronutrientforum.org/

## ຂໍ້ມູນທີ່ຈຳເປັນ ເພື່ອຕ້ານຕໍ່ໄພອຶດຫິວ ທີ່ເຊື່ອງຊ້ອນ




The Mighty Nutrients Coalition ແມ່ນການໂຄສະນາທີ່ມີຫຼັກຖານ ໃນການສະໜັບສະໜູນ ບົດບາດຂອງ ວິຕາມິນ ແລະ ແຮ່ທາດ – ເຊິ່ງເປັນຈຸລະສານອາຫານທີ່ມີບົດບາດ – ໃນການປັບປຸງສຸຂະພາບ ແລະ ປົດລ່ອກທ່າແຮງ ຂອງ ມະນຸດ. ບໍ່ດົນມານີ້, ໄດ້ຜະລິດວິດີໂອສັ້ນ ທີ່ອະທິບາຍຄວາມສຳຄັນ ຂອງ ຈຸລະສານອາຫານ ແລະ ຊ່ວຍອະທິບາຍວ່າເປັນຫຍັງຈຶ່ງມີຄວາມຈຳເປັນ ຕ້ອງການໃຫ້ມີການຄົ້ນຄວ້າເພີ່ມເຕີມຢ່າງຮີບດ່ວນ: https://youtu.be/WQ-YqwMRu9E?feature=shared

## ສຳມະນາອອນໄລກ່ຽວກັບໂພຊະນາການ

ສູນໂພຊະນາການສືບຕໍ່ ເປັນຫຼັກໃນການຈັດ ສຳມະນາອອນໄລປະຈຳເດືອນກ່ຽວກັບຫຼາຍຊິ່ງເຂດດ້ານການຄົ້ນຄວ້າດ້ານໂພຊະນາການ. ທ່ານສາມາດເຂົ້າຊົມສຳມະນາອອນໄລທີ່ທ່ານພາດໄດ້ທີ່ ຊ່ອງຢູທູບຂອງ ANRCB ມີທັງພາສາລາວ ແລະ ອັງກິດ.

**ການສຳມະນາ ຄັ້ງວັນທີ 4 ຕຸລາ 2023**

ໃນຫົວຂໍ້ "ການຈັດຕັ້ງປະຕິບັດແລະການປະເມີນຜົນມາດຕະການດ້ານໂພຊະນາການ ໃນໂຮງຮຽນ ໂດຍປະສົບການ ຂອງ SEAMEO RECFON" ໂດຍ Dr. Ade Luh Wiradyani, ຜູ້ຈັດການໜ່ວຍງານການພັດທະນາຊຸມຊົນ ແລະ ຫົວໜ້າໜ່ວຍປະສານງານກັບ ຄູ່ຮ່ວມພັດທະນາ




**ການສຳມະນາ ຄັ້ງວັນທີ 8 ພະຈິກ 2023**

ໃນຫົວຂໍ້ "ຜົນກະທົບຈາກການຂາດທາດໄອໂອດີນ ຂອງເດັກນ້ອຍນັກຮຽນ ເມືອງພູກູດ, ແຂວງຊຽງຂວາງ, ສປປ ລາວ" ໂດຍ ດຣ.ສືບພົງ ໂກວະຈິລາພັນ ນັກຄົ້ນຄວ້າອາວຸໂສ ຈາກໜ່ວຍງານໂພຊະນາການຊຸມຊົນ, ສະຖາບັນໂພຊະນາການ, ມະຫາວິທະຍາໄລມະຫິດົນ

**ການສຳມະນາ ຄັ້ງວັນທີ 8 ທັນວາ 2023**

ໃນຫົວຂໍ້ "ການຈັດຕັ້ງປະຕິບັດແລະການປະເມີນຜົນມາດຕະການດ້ານໂພຊະນາການ ໃນໂຮງຮຽນ ໂດຍປະສົບການ ຂອງ SEAMEO RECFON" ໂດຍ Dr. Ade Luh Wiradyani, ຜູ້ຈັດການໜ່ວຍງານການພັດທະນາຊຸມຊົນ ແລະ ຫົວໜ້າໜ່ວຍປະສານງານກັບຄູ່ຮ່ວມພັດທະນາ

*ສາມາດເບິ່ງສຳມະນາອອນໄລໄດ້ທີ່:* https://bit.ly/41zlmHV

***ການສຳມະນາຄັ້ງຕໍ່ໄປ ຈະຈັດຂຶ້ນທີ 10 ມັງກອນ 2024***

ໃນຫົວຂໍ້ ອາຫານທ່ຽງໃນໂຮງຮຽນ" ໂດຍ ທ່ານ ຮສ.ດຣ ກິດຕິ ສັນຈະເລີນຜົນ ສະຖາບັນພັດທະນາສຸຂະພາບອາຊຽນ ມະຫາວິທະຍາໄລມະຫິດົນ ປະເທດໄທ ການສຳມະນາຈັດເປັນພາສາໄທ ແລະມີການແປສົດພາສາອັງກິດ. ເວລາ 09:00-10:30 ໂມງ (ຕາມເວລາທ້ອງຖິ່ນຂອງລາວ) *ລົງທະບຽນໄດ້ທີ່:* https://bit.ly/3S4B8bH